ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 770 /ພນ

ນະຄອນຫຼວງວຽງຈັນ, ວັນທີ 31 / ຕຸລາ / 2012

# ຂໍ້ຕົກລົງ

## ວ່າດ້ວຍ ການນຳໃຊ້ເອກະສານກ່ຽວກັບທະບຽນຄອບຄົວ

- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 253/ພນ. ລົງວັນທີ 19 ສິງຫາ 2011 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງພາຍໃນ
- ອີງຕາມ ການສະເໜີຂອງກົມຄຸ້ມຄອງພົນລະເມືອງ ສະບັບເລກທີ 04/ກຄພ. ລົງວັນທີ 22 ຕຸລາ 2012.

## ລັດຖະມົນຕີວ່າການ ກະຊວງພາຍໃນ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ຮູບແບບ, ວິທີການ ແລະ ມາດຕະການນຳໃຊ້ເອກະສານ ກ່ຽວກັບທະບຽນຄອບຄົວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

### ມາດຕາ 2. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ກຳນົດສະເພາະການນຳໃຊ້ 4 ເອກະສານ: ໃບຢັ້ງຢືນການເກີດ, ໃບທະບຽນການແຕ່ງດອງ, ໃບຢັ້ງຢືນການຢ່າຮ້າງ ແລະ ໃບຢັ້ງຢືນການເສຍຊີວິດ ຂອງພົນລະເມືອງລາວ ແລະ ຊາວຕ່າງດ້າວ ໃນຂອບເຂດທົ່ວປະເທດ.

### ມາດຕາ 3. ຫຼັກການຄຸ້ມຄອງການນຳໃຊ້ເອກະສານ

3.1 ຮັບປະກັນ ຄວາມເປັນເອກະພາບ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

3.2 ມີຄວາມຍຸຕິທຳ, ມະນຸດສະທຳ ແລະ ຈັບຍາບັນ;

3.3 ຮັບປະກັນ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງໃນການດຳລົງຊີວິດ;

3.4 ຮັບປະກັນ ການບໍລິການ ໃຫ້ມີຄວາມສະດວກ, ໂປ່ງໃສ ແລະ ວ່ອງໄວ.

---

## ໝວດທີ II
## ຊື່, ຮູບແບບ, ການປະກອບ
## ແລະ ການຢັ້ງຢືນເອກະສານ

**ມາດຕາ 4. ຊື່ເອກະສານ**

4.1 ໃບຢັ້ງຢືນການເກີດ;

4.2 ໃບທະບຽນການແຕ່ງດອງ;

4.3 ໃບຢັ້ງຢືນການຢ່າຮ້າງ;

4.4 ໃບຢັ້ງຢືນການເສຍຊີວິດ.

**ມາດຕາ 5. ຮູບແບບ**

5.1 ໃບຢັ້ງຢືນການເກີດ ໃຫ້ນຳໃຊ້ເອກະສານຄັດຕິດເບີ 1;

5.2 ໃບທະບຽນການແຕ່ງດອງ ໃຫ້ນຳໃຊ້ສຳນວນເອກະສານຄັດຕິດເບີ 2;

5.3 ໃບຢັ້ງຢືນການຢ່າຮ້າງ ໃຫ້ນຳໃຊ້ເອກະສານຄັດຕິດເບີ 3;

5.4 ໃບຢັ້ງຢືນການເສຍຊີວິດ ໃຫ້ນຳໃຊ້ເອກະສານຄັດຕິດເບີ 4.

ຮູບແບບໃບຢັ້ງຢືນຂ້າງເທິງນີ້ ແມ່ນກະຊວງພາຍໃນເປັນຜູ້ກຳນົດ ແລະ ຈັດພິມເທົ່ານັ້ນ.

**ມາດຕາ 6. ການປະກອບ ແລະ ການຢັ້ງຢືນເອກະສານ**

**6.1 ການປະກອບເອກະສານ ແລະ ການຢັ້ງຢືນການເກີດຕ້ອງປະກອບດັ່ງນີ້:**

- **ການປະກອບເອກະສານ**

ເມື່ອມີເດັກເກີດຢູ່ໃນຄອບຄົວຂອງຕົນ, ສຸກສາລາ, ໂຮງໝໍ ແລ້ວໃຫ້ຫົວໜ້າຄອບຄົວ ຫຼື ຜູ້ຕາງໜ້າຄອບຄົວ ໄປແຈ້ງເປັນລາຍລັກອັກສອນ ຫຼື ທາງປາກເປົ່າຕໍ່ນາຍບ້ານບ່ອນຕົນອາໄສຢູ່ ໂດຍເອົາເອກະສານກ່ຽວກັບການເກີດ ຈາກສຸກສາລາ, ໂຮງໝໍເປັນຫຼັກຖານໃນການແຈ້ງການເກີດນັ້ນ;

ສຳລັບເດັກທີ່ເກີດຢູ່ບ່ອນອື່ນໆນັ້ນໃຫ້ພໍ່ ຫຼື ແມ່ ຫຼື ຜູ້ຕາງໜ້າຄອບຄົວໄປແຈ້ງຕໍ່ນາຍບ້ານບ່ອນເດັກເກີດ.

- **ການຢັ້ງຢືນການເກີດ**
  - ນາຍບ້ານ ອອກໃບຢັ້ງຢືນການເກີດ ພາຍໃນກຳນົດ 5 ວັນລັດຖະການ ພາຍຫຼັງໄດ້ຮັບການແຈ້ງ ວ່າມີເດັກເກີດໃໝ່ ແລ້ວຜູ້ຮ້ອງຂໍຕ້ອງນຳໄປຈົດທະບຽນ;

- ຫ້ອງການພາຍໃນເມືອງ ຈົດທະບຽນການເກີດພາຍໃນກຳນົດ 30 ວັນລັດຖະການ ນັບແຕ່ວັນໄດ້ຮັບໃບຢັ້ງຢືນການເກີດເປັນຕົ້ນໄປ;
- ຫ້ອງການພາຍເມືອງນຳສະເໜີໃຫ້ເຈົ້າໜ້າທີ່ ປ້ອງກັນຄວາມສະຫງົບ (ປກສ)ເມືອງ ຂຶ້ນທະບຽນສຳມະໂນຄົວ.

6.2. ການປະກອບເອກະສານ ແລະການຢັ້ງຢືນການແຕ່ງດອງ ຕ້ອງປະກອບດັ່ງນີ້:

- **ການປະກອບສຳນວນເອກະສານແຕ່ງດອງ**

  ໃບຄຳຮ້ອງຄູ່ບ່າວສາວ, ຊີວະປະຫວັດຄູ່ບ່າວສາວ, ໃບຢັ້ງຢືນຄວາມເປັນໂສດຄູ່ບ່າວສາວ, ບົດບັນທຶກການສູ່ຂໍ, ໃບຢັ້ງຢືນທີ່ຢູ່ຄູ່ບ່າວສາວ, ໃບຢັ້ງຢືນສຸຂະພາບ, ກໍລະນີເປັນຮ້າງ ຫຼື ເປັນໝ້າຍ ຕ້ອງມີໃບຢັ້ງຢືນ.

- **ການຢັ້ງຢືນເອກະສານການແຕ່ງດອງ**
  - ໃບຄຳຮ້ອງຄູ່ບ່າວສາວ ຕ້ອງຍື່ນຕໍ່ຫ້ອງການພາຍໃນເມືອງ ໂດຍຜ່ານອົງການປົກຄອງບ້ານ ບ່ອນຍິງ ຫຼື ຊາຍ ອາໄສຢູ່;
  - ຫ້ອງການພາຍໃນເມືອງ ຕ້ອງພິຈາລະນາ ຄຳຮ້ອງຂໍແຕ່ງດອງ ພາຍໃນກຳນົດເວລາບໍ່ໃຫ້ກາຍ 3 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ;
  - ຖ້າຫາກເຫັນວ່າຄູ່ບ່າວ ສາວນັ້ນມີເງື່ອນໄຂຄົບຖ້ວນ ຫ້ອງການພາຍໃນເມືອງ ກໍ່ຈະຮຽກພວກກ່ຽວເຂົ້າມາ ທຳການຈົດທະບຽນການແຕ່ງດອງ ໂດຍການຊ້ອງໜ້າພະຍານ ຝ່າຍຍິງ-ຝ່າຍຊາຍ ລວມສາມຄົນ;
  - ສຳລັບການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດໃຫ້ປະຕິບັດຕາມດຳລັດ ສະບັບເລກທີ 198/ນຍ, ລົງວັນທີ 19 ທັນວາ 1994; ການແຕ່ງດອງຂອງພົນລະເມືອງລາວ ກັບ ຄົນຕ່າງປະເທດຢູ່ນອກດິນແດນສປປລາວ ໃຫ້ປະຕິບັດຕາມແຈ້ງການເລກທີ 1144, ລົງວັນທີ 16 ກໍລະກົດ 2012 ຂອງກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ.

6.3. ການປະກອບເອກະສານ ແລະ ການຢັ້ງຢືນການຢ່າຮ້າງ ຕ້ອງປະກອບດັ່ງນີ້:

- **ການປະກອບສຳນວນເອກະສານຢ່າຮ້າງ**
  - ໃບຄຳຮ້ອງຂອງຄູ່ຜົວ, ເມຍ;
  - ບົດບັນທຶກ ການຢ່າຮ້າງຂອງນາຍບ້ານ (ກໍລະນີຢ່າຮ້າງດ້ວຍຄວາມສະໝັກໃຈ) ຫຼື ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.
- **ການຢັ້ງຢືນເອກະສານການຢ່າຮ້າງ**

  ຫ້ອງການພາຍໃນເມືອງ ຈົດທະບຽນ ແລະ ອອກໃບຢັ້ງຢືນການຢ່າຮ້າງ ໃຫ້ຜູ້ລະສະບັບພາຍໃນກຳນົດ 3 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

6.4. ການປະກອບເອກະສານ ແລະ ການຢັ້ງຢືນການເສຍຊີວິດ ຕ້ອງປະກອບດັ່ງນີ້:

- ການປະກອບເອກະສານ

ຖ້າບຸກຄົນໃດໜຶ່ງໃນຄອບຄົວຂອງຕົນ ຫາກໄດ້ເສຍຊີວິດ ໃຫ້ຜູ້ຕາງໜ້າຄອບຄົວ ໄປແຈ້ງເປັນລາຍລັກອັກສອນຕໍ່ນາຍບ້ານ;

ຖ້າບຸກຄົນໃດ ຫາກພົບເຫັນຊາກສົບ ກໍ່ໃຫ້ໄປແຈ້ງເປັນລາຍລັກອັກສອນ ຫຼື ທາງປາກເປົ່າຕໍ່ນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດ ບ່ອນຕົນພົບເຫັນຊາກສົບນັ້ນ.

- ການຢັ້ງຢືນເອກະສານການເສຍຊີວິດ

ເມື່ອໄດ້ຮັບການແຈ້ງເສຍຊີວິດຂອງລູກບ້ານແລ້ວ ນາຍບ້ານ ຕ້ອງອອກໃບຢັ້ງຢືນການເສຍຊີວິດ ພາຍໃນກຳນົດ 5 ວັນລັດຖະການໄວ້ເປັນຫຼັກຖານ;

ຈາກນັ້ນຫ້ອງການພາຍໃນເມືອງ ແຈ້ງໃຫ້ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ (ປກສ) ເມືອງ ລຶບຊື່ອອກຈາກສຳມະໂນຄົວຕາມລະບຽບການ;

ກໍລະນີ ໄດ້ຮັບການແຈ້ງພົບເຫັນຊາກສົບແລ້ວ ນາຍບ້ານຕ້ອງລາຍງານຕໍ່ເຈົ້າໜ້າທີ່, ທີ່ກ່ຽວຂ້ອງໃຫ້ທັນ.

## ໝວດທີ III
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 7. ຂໍ້ຫ້າມ

7.1 ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ກົດໜ່ວງຖ່ວງດຶງ, ແກ່ຍາວ, ປອມແປງເອກະສານ;

7.2 ຫ້າມຮັບ ຫລື ທວງເອົາສິນບົນນຳບຸກຄົນ ຫລື ຄອບຄົວທີ່ມາໃຊ້ບໍລິການ;

7.3 ຫ້າມເກັບ ຄ່າທຳນຽມເກີນທີ່ກົດໝາຍກຳນົດ;

7.4 ຫ້າມສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ.

### ມາດຕາ 8. ນະໂຍບາຍຕໍ່ຜູ້ມີຜົນງານ

ພະນັກງານ ຫຼື ບຸກຄົນຜູ້ປະຕິບັດ ຂໍ້ຕົກລົງສະບັບນີ້ ໄດ້ດີຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 9. ມາດຕະການຕໍ່ຜູ້ລະເມີດ

ພະນັກງານ ຫຼື ບຸກຄົນທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ປັບໃໝ ຫລື ດຳເນີນຄະດີຕາມລະບຽບກົດໝາຍ

## ໝວດທີ IV
## ບົດບັນຍັດສຸດທ້າຍ

---

**ມາດຕາ 10. ການຈັດຕັ້ງປະຕິບັດ**

10.1 ກະຊວງພາຍໃນ ຊີ້ນຳ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

10.2 ພະແນກພາຍໃນຂັ້ນແຂວງ, ຫ້ອງການພາຍໃນຂັ້ນເມືອງ, ອົງການປົກຄອງຂັ້ນບ້ານ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

10.3 ທຸກພາກສ່ວນທີ່ກ່ຽວຂ້ອງກັບການອອກ ແລະ ນຳໃຊ້ເອກະສານທະບຽນຄອບຄົວ ຈົ່ງປະສານງານ ແລະ ໃຫ້ການຮ່ວມມືກັນປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີຜົນສຳເລັດ.

**ມາດຕາ 11. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງພາຍໃນ**

ຄຳປານ ພິລາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ..............................

ເມືອງ..............................

ບ້ານ..............................

ເລກທີ........../ຫພນ.ທຄ

ລົງວັນທີ........./........../............

# ໃບຢັ້ງຢືນການເກີດ

| | | |
|---|---|---|
| 1. | ຊື່ ແລະ ນາມສະກຸນ ເພດ | |
| | ວັນ, ເດືອນ, ປີເກີດ | |
| | ວັນ,ເດືອນ,ປີເກີດ ຂຽນເປັນຕົວໜັງສື | |
| | ບ່ອນເກີດ ບ້ານ ເມືອງ ແຂວງ | |
| | ຊື່ ແລະ ນາມສະກຸນ ພໍ່ | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |
| | ຊື່ ແລະ ນາມສະກຸນ ແມ່ | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |

| | | |
|---|---|---|
| 2. | ຊື່ ແລະ ນາມສະກຸນ ຜູ້ແຈ້ງເກີດ | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |
| | ສາຍສຳພັນກັບຜູ້ເກີດ | |
| 3. | 1. ຊື່ ແລະ ນາມສະກຸນ ພະຍານທີ1 | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |
| | 2. ຊື່ ແລະ ນາມສະກຸນ ພະຍານທີ2 | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |
| | 3. ຊື່ ແລະ ນາມສະກຸນ ພະຍານທີ3 | |
| | ອາຍຸ ອາຊີບ | |
| | ທີ່ຢູ່ປັດຈຸບັນ ບ້ານ ເມືອງ ແຂວງ | |

**ຫົວໜ້າຫ້ອງການພາຍໃນເມືອງ** **ເຈົ້າໜ້າທີ່ທະບຽນຄອບຄົວ** **ນາຍບ້ານ**

**ພະຍານ**

1. ............................

2. ............................

3. ............................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................

ເມືອງ.............................  ເລກທີ.........../ຫພນ.ທຄ

ບ້ານ.............................  ວັນທີ........../.........../............

# ໃບຢັ້ງຢືນການເສຍຊີວິດ

ນາຍບ້ານໆ..................................ເມືອງ................................ແຂວງ..................................

ໄດ້ຢັ້ງຢືນວ່າ ທ້າວ ຫຼື ນາງ.......................................................ວັນ,ເດືອນ,ປີເກີດ.........../........./............

ທີ່ບ້ານ.............................ເມືອງ.............................ແຂວງ............................ເຊື້ອຊາດ.................

ສັນຊາດ.......................ອາຊີບ.................ເປັນຜົວ ຫຼື ເມຍ ຂອງ ທ້າວ ຫຼື ນາງ...........................................

ປັດຈຸບັນຢູ່ໜ່ວຍ........ບ້ານ.......................ເມືອງ..........................ແຂວງ..........................ເປັນລູກຂອງ

ທ້າວ......................................ແລະ ນາງ.............................................ທີ່ບ້ານ...........................

ເມືອງ......................................ແຂວງ.................................. ໄດ້ເສຍຊີວິດໃນເວລາ...................ໂມງ

ຂອງວັນທີ......../......./..........ຢູ່ທີ່ບ້ານ.......................ເມືອງ.........................ແຂວງ...........................

ດ້ວຍສາເຫດ..........................................................................................................

.........................................................................................................ລວມອາຍຸໄດ້.....................ປີ

ດັ່ງນັ້ນ, ຈຶ່ງໄດ້ອອກໃບຢັ້ງຢືນການເສຍຊີວິດສະບັບນີ້ ໄວ້ເພື່ອເປັນຫຼັກຖານ.

**ຫົວໜ້າຫ້ອງການພາຍໃນເມືອງ** | **ເຈົ້າໜ້າທີ່ທະບຽນຄອບຄົວ** | **ນາຍບ້ານ**

**ພະຍານ**

1. .........................
2. .........................
3. .........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ..................................

ເມືອງ..................................

ເລກທີ............./ທພນ.ທຄ

ວັນທີ............/........../..............

# ໃບຢັ້ງຢືນການແຕ່ງດອງ

| ຮູບຊາຍ 3x4 | ຮູບຍິງ 3x4 |
|---|---|

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ຄຳຮ້ອງຂໍຈົດທະບຽນການແຕ່ງດອງ ຂອງຄູ່ບ່າວ-ສາວ ສະບັບລົງວັນທີ.........../.........../...............

## ຫົວໜ້າຫ້ອງການພາຍໃນເມືອງຕົກລົງ:

ອອກໃບຢັ້ງຢືນການແຕ່ງດອງໃຫ້ແກ່: ທ້າວ..............................................................ວັນ,ເດືອນ,ປີເກີດ........../........../............ເຊື້ອຊາດ..............
ສັນຊາດ.....................ອາຊີບ.........................ປັດຈຸບັນຢູ່ໜ່ວຍ.............ບ້ານ..............................ເມືອງ..............................ແຂວງ............................
ກັບ ນາງ..............................................................ວັນ,ເດືອນ,ປີເກີດ........../........../............ເຊື້ອຊາດ........................ສັນຊາດ............................
ອາຊີບ..............................ປັດຈຸບັນຢູ່ໜ່ວຍ..............ບ້ານ...................................ເມືອງ........................................ແຂວງ.......................................

ພວກກ່ຽວເປັນຄູ່ຜົວ-ເມຍທີ່ຖືກຕ້ອງຕາມກົດໝາຍ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນການແຕ່ງດອງນີ້ໄວ້ເພື່ອເປັນຫຼັກຖານ.

**ຫົວໜ້າຫ້ອງການພາຍໃນເມືອງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ....................................

ເມືອງ....................................

ເລກທີ......../ຫພນ.ທຄ

ວັນທີ............/.........../...........

# ໃບຢັ້ງຢືນການຢ່າຮ້າງ

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ບົດບັນທຶກການຢ່າຮ້າງຂອງບ້ານ..............................................ສະບັບເລກທີ.......................ລົງວັນທີ........../.........../................ທີ່ໄດ້ຕົກລົງ ໃຫ້ຢ່າຮ້າງກັນ ຫຼື ຕາມຄຳຕັດສິນຂອງສານ ສະບັບເລກທີ................/..............ລົງວັນທີ............./.........../........... ຂອງຄູ່ຜົວ-ເມຍ.

## ຫົວໜ້າຫ້ອງການພາຍໃນເມືອງຕົກລົງ:

ອອກໃບຢັ້ງຢືນການຢ່າຮ້າງໃຫ້ແກ່: ທ້າວ.............................................................. ວັນ,ເດືອນ,ປີເກີດ.........../........../............ ອາຊີບ..................... ເຊື້ອຊາດ........................ ສັນຊາດ........................... ປັດຈຸບັນຢູ່ໜ່ວຍ.......... ບ້ານ........................... ເມືອງ......................... ແຂວງ............................ ແລະ ນາງ.............................................................. ວັນ,ເດືອນ,ປີເກີດ.........../........../............ ອາຊີບ................... ເຊື້ອຊາດ............................... ສັນຊາດ............................ ປັດຈຸບັນຢູ່ໜ່ວຍ........... ບ້ານ................................ ເມືອງ................................ ແຂວງ................................................

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໃຫ້ພວກກ່ຽວເພື່ອໄວ້ເປັນຫຼັກຖານ.

**ຫົວໜ້າຫ້ອງການພາຍໃນເມືອງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

**ຮຽນ**: ທ່ານຫົວໜ້າຫ້ອງການພາຍໃນເມືອງ.............................................................

(ໂດຍຜ່ານນາຍບ້ານ.........................................................................................)

**ເລື່ອງ**: ຂໍຈົດທະບຽນການແຕ່ງດອງ.

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ເງື່ອນໄຂຮັກມັກກັນໂດຍການເຫັນດີຂອງພໍ່- ແມ່ ຜູ້ປົກຄອງຕາມບົດບັນທຶກການສູ່ຂໍ ສະບັບເລກທີ............../.............., ລົງວັນທີ............../.........../.........................................

ພວກຂ້າພະເຈົ້າ ທ້າວ..........................................................ອາຍຸ........ປີ,ສັນຊາດ.......... ອາຊີບ....................ໄດ້ຈົດເຂົ້າສຳມະໂນຄົວເລກທີ..............ລົງວັນທີ........./........./..........ປັດຈຸບັນ ຢູ່ໜ່ວຍ..........ບ້ານ............................ເມືອງ............................ແຂວງ.......................... ແລະ ນາງ.....................................ອາຍຸ........ປີ,ສັນຊາດ............................ອາຊີບ......................... ໄດ້ຈົດເຂົ້າສຳມະໂນຄົວເລກທີ..............ລົງວັນທີ........../........./............ປັດຈຸບັນຢູ່ໜ່ວຍ................ ບ້ານ.....................................ເມືອງ.......................................ແຂວງ..................................

ຂໍຖືເປັນກຽດຢ່າງສູງຮຽນມາຍັງທ່ານ ເພື່ອຂໍຈົດທະບຽນການແຕ່ງດອງ.

ຖ້າໄດ້ຮັບການອະນຸຍາດຈົດທະບຽນການແຕ່ງດອງຖືກຕ້ອງຕາມກົດໝາຍແລ້ວ, ພວກຂ້າພະເຈົ້າຂໍປະຕິຍານດັ່ງລຸ່ມນີ້:

1. ຕັ້ງໜ້າສ້າງຄອບຄົວໃຫ້ເປັນຄອບຄົວວັດທະນະທຳໃໝ່, ດຳລົງຊີວິດໃຫ້ຖືກຕ້ອງຕາມກົດໝາຍ;
2. ຮັບປະກັນຄວາມສະເໝີພາບ ລະຫ່ວາງ ຜົວ-ເມຍ;
3. ເຄົາລົບນັບຖືພໍ່ແມ່, ຍາດພີ່ນ້ອງທັງສອງຝ່າຍ, ເບິ່ງແຍງຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ.

ດັ່ງນັ້ນ, ຈຶ່ງຊຽນຄຳຮ້ອງສະບັບນີ້ມາຍັງທ່ານເພື່ອພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

**ຢັ້ງຢືນຈາກນາຍບ້ານ** **ລາຍເຊັນຜູ້ຮ້ອງຂໍ**

**ເອກະສານຄັດຕິດມາພ້ອມ:**
- ໃບຄຳຮ້ອງ
- ໃບຢັ້ງຢືນທີ່ຢູ່
- ໃບຊີວະປະຫວັດ
- ໃບກວດສຸຂະພາບ
- ໃບຢັ້ງຢືນສະຖານະພາບຂອງບຸກຄົນ
- ບົດບັນທຶກການສູ່ຂໍ

ສຳນວນເອກະສານຄັດຕິດເບີ2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ..............................

ເມືອງ..............................

ບ້ານ..............................

ເລກທີ........../...........

ວັນທີ........./........../............

# ໃບຢັ້ງຢືນສະຖານະພາບຂອງບຸກຄົນ

ນາຍບ້ານໆ..................................ເມືອງ................................ແຂວງ...................................

ຂໍຢັ້ງຢືນວ່າ: ທ້າວ ຫຼື ນາງ................................................ວັນ,ເດືອນ,ປີເກີດ........./......../............

ເຊື້ອຊາດ............................ສັນຊາດ......................ຊົນເຜົ່າ.....................ສາສະໜາ.......................

ອາຊີບ.....................ປັດຈຸບັນຢູ່ໜ່ວຍ..................ບ້ານ..........................ເມືອງ..............................

ແຂວງ..............................ໄດ້ຈົດເຂົ້າສຳມະໂນຄົວເລກທີ...........ລົງວັນທີ......../......./...........ອອກໃຫ້

ໂດຍ.........................................ເປັນລູກຂອງທ້າວ..............................................................ແລະ

ນາງ..............................................ປັດຈຸບັນຢູ່ບ້ານ...............................ເມືອງ.............................

ແຂວງ......................................ປັດຈຸບັນຜູ້ກ່ຽວຢູ່ໃນສະຖານະພາບ: ☐ໂສດ ☐ຮ້າງ ☐ໝ້າຍ

ໃບຢັ້ງຢືນສະບັບນີ້ໃຊ້ສຳລັບປະກອບເອກະສານຂໍແຕ່ງດອງ ແລະ ມີກຳນົດໃຊ້ໄດ້ 3 ເດືອນ.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໄວ້ເພື່ອເປັນຫຼັກຖານ.

**ນາຍບ້ານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ............................

ເມືອງ.............................

ບ້ານ..............................

ເລກທີ........../...........

ວັນທີ........./........../............

ຮູບ 3x4

# ໃບຢັ້ງຢືນທີ່ຢູ່

ນາຍບ້ານໆ..................................ເມືອງ................................ແຂວງ..................................

ຂໍຢັ້ງຢືນວ່າ ທ້າວ ຫຼື ນາງ...............................ວັນ,ເດືອນ,ປີເກີດ......../......./..........ເຊື້ອຊາດ............

ສັນຊາດ....................ສາສະໜາ..................ຊົນເຜົ່າ..................ອາຊີບ........................ບັດປະຈຳຕົວ

ເລກທີ.......................................ປັດຈຸບັນຢູ່ ເຮືອນເລກທີ.............ໜ່ວຍທີ...........ບ້ານ....................

ເບີໂທລະສັບ...........................................ສຳມະໂນຄົວເລກທີ..............ລົງວັນທີ......../......../............

ເປັນລູກຂອງ ທ້າວ..........................................ແລະ ນາງ............................................ປັດຈຸບັນຢູ່

ບ້ານ..........................................ເມືອງ......................................ແຂວງ........................................

ຊຶ່ງຜູ້ກ່ຽວຢູ່ໃນຄວາມຮັບຜິດຊອບຂອງອົງການປົກຄອງບ້ານຂອງພວກເຮົາຢ່າງແທ້ຈິງ.

ໃບຢັ້ງຢືນສະບັບນີ້ໃຊ້ໄດ້ພາຍໃນກຳນົດເວລາ 3 ເດືອນ.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໃຫ້ຜູ້ກ່ຽວໄວ້ເປັນຫຼັກຖານ.

**ນາຍບ້ານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຊີວະປະຫວັດຫຍໍ້

## 1. ສະພາບຕົນເອງ

ຊື່ ແລະ ນາມສະກຸນ..............................................ວັນ,ເດືອນ,ປີເກີດ......../......./..........

ບ້ານເກີດ...........................................ເມືອງ...............................ແຂວງ.................................

ເຊື້ອຊາດ.............................ສັນຊາດ.......................ຊົນເຜົ່າ....................ສາສະໜາ...................

ລະດັບການສຶກສາສາມັນ..........................................ວິຊາສະເພາະ............................................

ຊັ້ນວິຊາສະເພາະ..................................................ອາຊີບປັດຈຸບັນ...........................................

ບ່ອນປະຈຳການ....................................................ໜ້າທີ່ຮັບຜິດຊອບ........................................

ວັນ,ເດືອນ,ປີ ສັງກັດລັດ............../.........../................ປັດຈຸບັນຢູ່ໜ່ວຍ........................................

ບ້ານ.................................ເມືອງ......................................ແຂວງ............................................

## 2. ການເຄື່ອນໄຫວຂອງຕົນເອງແຕ່ລະໄລຍະ ( ອາຍຸ 8 ປີ ເຖິງປັດຈຸບັນ )

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

3. **ສະພາບຄອບຄົວ ພໍ່, ແມ່**

ຊື່ ແລະ ນາມສະກຸນ ພໍ່.............................................ວັນ,ເດືອນ,ປີເກີດ........./......./..........

ເຊື້ອຊາດ................ສັນຊາດ..................ອາຊີບ................ປັດຈຸບັນຢູ່ໜ່ວຍ..................................

ບ້ານ..................................ເມືອງ......................................ແຂວງ.........................................

ຊື່ ແລະ ນາມສະກຸນ ແມ່.............................................ວັນ,ເດືອນ,ປີເກີດ........./......./..........

ເຊື້ອຊາດ................ສັນຊາດ..................ອາຊີບ................ປັດຈຸບັນຢູ່ໜ່ວຍ..................................

ບ້ານ..................................ເມືອງ......................................ແຂວງ.........................................

**ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ຂອງອ້າຍ, ເອື້ອຍ, ນ້ອງຄີງ ຂອງຕົນ**

1. ........................................................................................................................
2. ........................................................................................................................
3. ........................................................................................................................
4. ........................................................................................................................
5. ........................................................................................................................
6. ........................................................................................................................
7. ........................................................................................................................
8. ........................................................................................................................
9. ........................................................................................................................
10. ........................................................................................................................

ຂ້າພະເຈົ້າຂໍຮັບປະກັນວ່າ ທຸກຂໍ້ຄວາມທີ່ຂຽນລົງໃນຊີວະປະຫວັດ ແມ່ນຖືກຕ້ອງທຸກປະການ, ຖ້າຜິດ ຈາກຄວາມເປັນຈິງ ຂ້າພະເຈົ້າຂໍຮັບຜິດຊອບຕໍ່ໜ້າກົດໝາຍ.

ທີ່..................................ວັນທີ........./......./...........

ຄຳເຫັນ ແລະ ລາຍເຊັນນາຍບ້ານ　　　　　　　　　　ເຈົ້າຂອງປະຫວັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................

ເມືອງ.............................

ບ້ານ.............................

ເລກທີ........../...........

ວັນທີ........./........../............

# ບົດບັນທຶກການສູ່ຂໍ ບ່າວ-ສາວ

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ຄວາມຮັກມັກຂອງຄູ່ບ່າວ - ສາວ.

ໃນວັນທີ........./......../...........ຢູ່ເຮືອນຂອງທ່ານ...............................................ໜ່ວຍ..........
ບ້ານ..............................ເມືອງ...........................ແຂວງ.......................... ໄດ້ມີພິທີສູ່ຂໍ ບ່າວ-ສາວ
ເພື່ອເອົາກັນເປັນ ຜົວ-ເມຍ ຕາມຮີດຄອງປະເພນີລະຫ່ວາງ ທ້າວ.....................................................
ວັນ,ເດືອນ,ປີເກີດ........./......../.........ອາຊີບ.............ແລະ ນາງ................................................
ວັນ,ເດືອນ,ປີເກີດ........../......../..............ອາຊີບ..................................................................

| * **ທາງຝ່າຍຊາຍປະກອບມີ** | * **ສາຍພົວພັນກັບເຈົ້າບ່າວ** |
|---|---|
| 1. ທ່ານ...................................... | ...................................... |
| 2. ທ່ານ...................................... | ...................................... |
| 3. ທ່ານ...................................... | ...................................... |

| * **ທາງຝ່າຍຍິງປະກອບມີ** | * **ສາຍພົວພັນກັບເຈົ້າສາວ** |
|---|---|
| 1. ທ່ານ...................................... | ...................................... |
| 2. ທ່ານ...................................... | ...................................... |
| 3. ທ່ານ...................................... | ...................................... |

**ຜ່ານການປຶກສາຫາລືທັງສອງຝ່າຍໄດ້ຕົກລົງເປັນເອກະພາບກັນດັ່ງນີ້:**

**1)** ຝ່າຍຊາຍໃຫ້ສິນສອດຄ່າດອງເປັນເງິນ...............................ກີບ, ເປັນຄຳ.................ບາດ

.......................................................................................................

**2)** ປົງສິດມື້ສູ່ຂໍ ຫຼື ມື້ແຕ່ງດອງເປັນເງິນ...............................ກີບ, ເປັນຄຳ.................ບາດ

.......................................................................................................

**3)** ຄ່າດອງຄ້າງ (ລ່ານ) ເປັນເງິນ.......................................ກີບ, ເປັນຄຳ.................ບາດ

.......................................................................................................

**4)** ເຄື່ອງບ່ອນຢູ່ບ່ອນນອນ.......................................................................

.......................................................................................................

5) ອາຫານການກິນ ມື້ແຕ່ງດອງ........................................................................................

..........................................................................................................................

6) ຊັບເດີມຂອງເຈົ້າບ່າວ...............................................................................................

..........................................................................................................................

7) ຊັບເດີມຂອງເຈົ້າສາວ...............................................................................................

..........................................................................................................................

8) ນັດໝາຍວັນເວລາແຕ່ງດອງ.......................................................................................

..........................................................................................................................

**ເພື່ອເຮັດໃຫ້ການສູ່ຂໍທີ່ຕົກລົງກັນຂ້າງເທິງໄດ້ຮັບການຈັດຕັ້ງປະຕິບັດ, ທັງສອງຝ່າຍມີຂໍ້ຜູກພັນກັນດັ່ງນີ້:** ..........................................................................................................................

..........................................................................................................................

..........................................................................................................................

ຖ້າມີຝ່າຍໃດຝ່າຍໜຶ່ງ ຫາກບໍ່ປະຕິບັດຕາມບົດບັນທຶກທີ່ໄດ້ຕົກລົງກັນນີ້ແມ່ນຕ້ອງຮັບຜິດຊອບຕໍ່ກົດໝາຍວ່າດ້ວຍຄອບຄົວ ກ່ຽວກັບການທົດແທນຄວາມເສຍຫາຍເນື່ອງຈາກການບໍ່ປະຕິບັດຕາມການສູ່ຂໍ.

**ບົດບັນທຶກສະບັບນີ້ອ່ານຊ້ອງໜ້າພີ່ນ້ອງທັງສອງຝ່າຍ ແລະ ເຫັນວ່າຖືກຕ້ອງຄົບຖ້ວນຕາມການປຶກສາຫາລືຕົກລົງກັນ.**

**ສະນັ້ນ, ຈຶ່ງພ້ອມກັນລົງລາຍເຊັນໄວ້ເປັນຫຼັກຖານ.**

<u>ລາຍເຊັນບ່າວ-ສາວ</u>

1. ....................................
2. ....................................

<u>ລາຍເຊັນຜູ້ບັນທຶກ</u>

..........................................

..........................................

<u>ລາຍເຊັນພະຍານຝ່າຍຊາຍ</u>

1. ....................................
2. ....................................
3. ....................................

<u>ລາຍເຊັນພະຍານຝ່າຍຍິງ</u>

1. ....................................
2. ....................................
3. ....................................

ຢັ້ງຢືນຈາກນາຍບ້ານບ່ອນສູ່ຂໍ

ຜູ້ຕາງໜ້າອົງການປົກຄອງບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

**ຮຽນ:** ທ່ານຫົວໜ້າຫ້ອງການພາຍໃນເມືອງ..........................................................................
(ໂດຍຜ່ານນາຍບ້ານ..........................................................................................)

**ເລື່ອງ:** ຂໍຢ່າຮ້າງດ້ວຍຄວາມສະໝັກໃຈ

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ..........................................................................................................

ພວກຂ້າພະເຈົ້າ ທ້າວ..................................................ວັນ,ເດືອນ,ປີເກີດ........./......./..........
ອາຊີບ.....................ເຊື້ອຊາດ..................ສັນຊາດ................... ແລະ ນາງ..............................
ວັນ,ເດືອນ,ປີເກີດ........../......./.............ອາຊີບ.............................ເຊື້ອຊາດ............................
ສັນຊາດ.................ປັດຈຸບັນຢູ່ໜ່ວຍ............ບ້ານ............................ເມືອງ............................
ແຂວງ.................................ໄດ້ຈົດເຂົ້າສຳມະໂນຄົວເລກທີ.............ລົງວັນທີ......./......./.............

ມີຈຸດປະສົງຮຽນມາຍັງທ່ານເພື່ອຂໍຈົດທະບຽນຢ່າຮ້າງດ້ວຍຄວາມສະໝັກໃຈ ເນື່ອງຈາກວ່າ: .......
..........................................................................................................................
..........................................................................................................................
..........................................................................................................................

ດັ່ງນັ້ນ, ຈຶ່ງໄດ້ຮ້ອງຂໍມາຍັງທ່ານເພື່ອພິຈາລະນາແກ້ໄຂຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ທີ່............................ວັນທີ......./....../...........

**ນາຍບ້ານ** **ຜູ້ຮ້ອງຂໍ**

ສຳນວນເອກະສານຄັດຕິດເບີ3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

**ຮຽນ:** ທ່ານຫົວໜ້າຫ້ອງການພາຍໃນເມືອງ..............................................................

(ໂດຍຜ່ານນາຍບ້ານ......................................................................................)

**ເລື່ອງ:** ຂໍຢ່າຮ້າງຕາມຄຳຕັດສິນຂອງສານ

- ອີງຕາມ ກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ ສພຊ, ລົງວັນທີ 26 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ຄຳຕັດສິນຂອງສານ ສະບັບເລກທີ............/............ລົງວັນທີ........../......../...........

ພວກຂ້າພະເຈົ້າ ທ້າວ..................................................ວັນ,ເດືອນ,ປີເກີດ........./......./.......... ອາຊີບ.....................ເຊື້ອຊາດ..................ສັນຊາດ................... ແລະ ນາງ.............................. ວັນ,ເດືອນ,ປີເກີດ........./......./.............ອາຊີບ.............................ເຊື້ອຊາດ............................ ສັນຊາດ.................ປັດຈຸບັນຢູ່ໜ່ວຍ............ບ້ານ............................ເມືອງ............................ ແຂວງ.................................ໄດ້ຈົດເຂົ້າສຳມະໂນຄົວເລກທີ.............ລົງວັນທີ......./......./............

ມີຈຸດປະສົງຮຽນມາຍັງທ່ານເພື່ອຂໍຈົດທະບຽນຢ່າຮ້າງຕາມຄຳຕັດສິນຂອງສານ ເນື່ອງຈາກວ່າບໍ່ສາມາດດຳລົງຊີວິດຢູ່ຮ່ວມກັນໄດ້ຍ້ອນ:.......................................................................................................
...........................................................................................................................................
...........................................................................................................................................

ດັ່ງນັ້ນ, ຈຶ່ງໄດ້ຮ້ອງຂໍມາຍັງທ່ານເພື່ອພິຈາລະນາແກ້ໄຂຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ທີ່............................ວັນທີ......./....../...........

**ນາຍບ້ານ** **ຜູ້ຮ້ອງຂໍ**